**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 872 / ຫຄຊກລ.ຄພ

ນະຄອນຫຼວງວຽງຈັນ, ວັນທີ 04 ຕຸລາ 2023

**ບົດລາຍງານຜົນການລົງກວດກາຄວບຄຸມຄຸນນະພາບ (QC) ວຽກງານກວດກູ້ລະເບີດ**
**ພື້ນທີ່ກະສິກໍາ ຂອງກອງກວດ-ກູ້ລະເບີດເພື່ອມະນຸດສະທໍາ 58 ກອງທັບ.**

**ຮຽນ:** ທ່ານຫົວໜ້າຫ້ອງການ ຄຊກລ.

**ເລື່ອງ:** ຜົນການລົງກວດກາຄວບຄຸມຄຸນນະພາບ (QC) ພື້ນທີ່ກະສິກໍາ ຂອງກອງກວດ-ກູ້ລະເບີດເພື່ອມະນຸດສະທໍາ 58 ກອງທັບ.

**ພາກສະເໜີ**

ອີງຕາມ ໜັງສືສະເໜີ ຂອງກອງກວດ-ກູ້ລະເບີດເພື່ອມະນຸດສະທໍາ 58 ກອງທັບ ເລກທີ 1225/ກລບ58, ລົງວັນທີ 11 ກັນຍາ 2023, ໃຫ້ທີມງານກວດກາຄຸນນະພາບ ຫ້ອງການ ຄຊກລ ລົງຕິດຕາມກວດກາ ການປະຕິບັດງານເກັບກູ້ລະເບີດ ພື້ນທີ່ດິນກະສິກໍາ, ຢູ່ໃນ 02 ເມືອງມີຈໍານວນ 04 ສະໜາມຄື: ບ້ານ ນໍ້າພາວ ເມືອງ ຄໍາເກີດ ຈໍານວນ 02 ສະໜາມ ແລະ ບ້ານ ນາດີ 01 ສະໜາມ, ບ້ານ ຈອມທອງ 01 ສະໜາມ, ເມືອງ ວຽງທອງ ແຂວງ ບໍລິຄໍາໄຊ.

**ຄະນະທີມງານກວດກາຄຸນນະພາບມີລາຍຊື່ດັ່ງລຸ່ມນີ້:**

1. ທ່ານ ບຸນຮຽງ ສຸກຈັນທະລາວົງ, ວິຊາການກວດກາຄຸນນະພາບຂອງຫ້ອງການ ຄຊກລ.
2. ທ່ານ ໄລທອງ ຈັນທາທິລາດ, ວິຊາການກວດກາຄຸນນະພາບ.ຫ້ອງການ ຄຊກລ
3. ທ່ານ ພູວົງ ສີສະໝັກ ຂັບລົດ/ວິຊາການກວດກາຄຸນນະພາບຂອງຫ້ອງການ ຄຊກລ.
4. ທ່ານ. ສອນໄຊ ພົມມະທໍາ, ວິຊາການ/ແພດຂອງທີມງານກວດກາຄຸນນະພາບ.ຫ້ອງການ ຄຊກລ
5. ທ່ານ ສອນສີ ບຸນລືໄຕ ວິຊາການກອງກວດກູ້ລະເບີດເພື່ອມະນຸດສະທໍາ 58 ກອງທັບ.

## I. ຈຸດປະສົງ

- ລົງກວດກາການເຄື່ອນໄຫວວຽກງານການເກັບກູ້ ແລະ ຄວບຄຸມຄຸນນະພາບ (QC) ເນື້ອທີ່ໆເກັບກູ້ສໍາເລັດແລ້ວ ພື້ນທີ່ ດິນກະສິກໍາ ຂອງກອງກວດ-ກູ້ລະເບີດເພື່ອມະນຸດສະທໍາ 58 ກອງທັບ.
- ເພື່ອເປັນການຢັ້ງຢືນທາງດ້ານວິຊາການ, ອຸປະກອນຮັບໃຊ້ວຽກງານເກັບກູ້ ແລະ ຄວາມປອດໄພພື້ນທີ່ສະໜາມກວດກູ້ທີ່ສໍາເລັດແລ້ວ.

## II. ໂຄງຮ່າງການຈັດຕັ້ງທີມງານລົງກວດກູ້ ຂອງກອງກວດ-ກູ້ລະເບີດເພື່ອມະນຸດສະທໍາ 58 ກອງທັບ.

ໂຄງຮ່າງການຈັດຕັ້ງ ຂອງກອງກວດ-ກູ້ລະເບີດເພື່ອມະນຸດສະທໍາ 58 ກອງທັບ ທີ່ລົງເຄື່ອນໄຫວ ສໍາຫຼວດ, ກວດກູ້ຢູ່ 02 ເມືອງ ປະກອບມີ 03 ທີມງານກວດກູ້, ຈໍານວນພະນັກງານທັງໝົດມີ 39 ສະຫາຍ, ຍິງ 03 ສະຫາຍ ການເຄື່ອນໄຫວວຽກງານຂອງກອງກວດ-ກູ້ລະເບີດເພື່ອມະນຸດສະທໍາ 58 ກອງທັບ ແມ່ນໄດ້ເຮັດທັງການສໍາຫຼວດວິເຄາະວິໄຈຂໍ້ມູນການຖິ້ມລະເບີດກ່ອນ ຈາກນັ້ນແມ່ນໄດ້ເກັບກູ້ເຕັມຮູບແບບ 100%, ການສໍາຫຼວດທາງດ້ານວິຊາການ

ແລະ ການເກັບກູ້ ລບຕ ພາຍຫຼັງສຳເລັດແລ້ວແມ່ນໄດ້ເຮັດໃບມອບຮັບນຳໃຊ້ທີ່ດິນ ແລະ ປັກໝາຍຂອບເຂດຢ່າງຄົບຖ້ວນ, ການນຳໃຊ້ເຄື່ອງກວດກູ້ມີ 01 ປະເພດຄື Vallon CMX-3 ໃນຄວາມເລິກ 25 ຊມ.

## III. ຜົນໄດ້ຮັບການລົງຄວບຄຸມຄຸນນະພາບ ຈຳນວນ 04 ສະໜາມ.

1. ສະໜາມບ້ານ ນ້ຳພາວ ເມືອງ ຄຳເກີດ ແຂວງ ບໍລິຄຳໄຊ ລະຫັດໜ້າວຽກ Task ID: Army 58_AC_2023_1105154_001_Area=55,839 ມ$^2$ ທີມງານກວດກາຄຸນນະພາບຫ້ອງການ ຄຊກລ ໄດ້ຄວບຄຸມຕົວຈິງໄດ້ 1,250 ຕາແມັດ, ຄິດໄລ່ເປັນເປີເຊັນເທົ່າກັບ 2,2%.
2. ສະໜາມບ້ານ ນ້ຳພາວ ເມືອງ ຄຳເກີດ ແຂວງ ບໍລິຄຳໄຊ ລະຫັດໜ້າວຽກ Task ID: Army 58_AC_2023_1105154_002_Area=15,000 ມ$^2$ ທີມງານກວດກາຄຸນນະພາບຫ້ອງການ ຄຊກລ ໄດ້ຄວບຄຸມຕົວຈິງໄດ້ 640 ຕາແມັດ, ຄິດໄລ່ເປັນເປີເຊັນເທົ່າກັບ 4,2%.
3. ສະໜາມບ້ານ ນາດີ ເມືອງ ວຽງທອງ ແຂວງ ບໍລິຄຳໄຊ ລະຫັດໜ້າວຽກ Task ID: Army 58_AC_2023_1106018_001_Area=23,614 ມ$^2$ ທີມງານກວດກາຄຸນນະພາບຫ້ອງການ ຄຊກລ ໄດ້ຄວບຄຸມຕົວຈິງໄດ້ 625 ຕາແມັດ, ຄິດໄລ່ເປັນເປີເຊັນເທົ່າກັບ 2,6%.
4. ສະໜາມບ້ານ ຈອມທອງ ເມືອງ ຄຳເກີດ ແຂວງ ບໍລິຄຳໄຊ ລະຫັດໜ້າວຽກ Task ID: Army 58_AC_2023_1106032_001_Area=11,972 ມ$^2$ ທີມງານກວດກາຄຸນນະພາບຫ້ອງການ ຄຊກລ ໄດ້ຄວບຄຸມຕົວຈິງໄດ້ 625 ຕາແມັດ, ຄິດໄລ່ເປັນເປີເຊັນເທົ່າກັບ 5,2%.

ມີເນື້ອທີ່ເກັບກູ້ທັງໝົດ 106,506 ຕາແມັດ, ການຄວບຄຸມຄຸນນະພາບພາຍນອກ ພື້ນທີ່ໆເກັບກູ້ຢ່າງໜ້ອຍບໍ່ໃຫ້ຫຼຸດ 2% = 3,140 ມ$^2$ , ຄິດໄລ່ເປັນເປີເຊັນເທົ່າກັບ 14,2%, ຜ່ານການກວດກາຂອງທີມງານຄວບຄຸມຄຸນນະພາບຫ້ອງການ ຄຊກລ ເຫັນວ່າ ໃນພື້ນທີ່ດັ່ງກ່າວແມ່ນມີຄວາມປອດໄພ, ມີຄຸນນະພາບ ແລະ ກໍ່ບໍ່ພົບເສດເຫຼັກທີ່ໃຫຍ່ເກີນເຄິ່ງບົມບີ 26 (½ blu26) ທີ່ມາດຕະຖານແຫ່ງຊາດໄດ້ກຳນົດໄວ້.

**<u>ໝາຍເຫດ :</u>** ລາຍລະອຽດແມ່ນມີແຜນທີ່ຈຸດພິກັດຄວບຄຸມຄຸນນະພາບແຕ່ລະຈຸດທີ່ໄດ້ກວດກູ້ສຳເລັດແລ້ວຂອງທີມງານກວດກາຄຸນນະພາບຫ້ອງການ ຄຊກລ ຕິດຄັດມາພ້ອມ.

## IV ຈຸດດີຂອງກອງກວດ-ກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ.

- ທາງດ້ານເຄື່ອງມືເກັບກູ້ລະເບີດກໍ່ເຫັນວ່າ, ມີຄຸນນະພາບ ແລະ ຄົບຖ້ວນຕາມມາດຕະຖານແຫ່ງຊາດທີ່ໄດ້ກຳນົດ.
- ໂຄງຮ່າງການຈັດຕັ້ງ, ວິຊາການເກັບກູ້ລະເບີດ ແລະ ບຸກຄະລາກອນຂອງກອງກວດກູ້, ກໍ່ເຫັນວ່າຖືກຕ້ອງຕາມມາດຕະຖານການປະຕິບັດງານຂອງອົງການ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດ.
- ດ້ານເອກະສານປະຈຳສະໜາມເຊັ່ນ: ແຜນວາດສະໜາມ, ປຶ້ມຕິດຕາມປະຈຳວັນ, ແຜນເຄື່ອນຍ້າຍຄົນເຈັບ, ບົດລາຍງານຜົນສຳເລັດ, ໃບມອບຮັບການນຳໃຊ້ທີ່ດິນ ແລະ ເອກະສານອື່ນໆກໍ່ເຫັນວ່າຖືກຕ້ອງຄົບຖ້ວນ.

## V. ຈຸດອ່ອນ ແລະ ຄົງຄ້າງທີ່ຕ້ອງໄດ້ປັບປຸງ.

- ແນະນຳໃຫ້ທາງກອງກວດ-ກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ ເວລາເຮັດເອກະສານໜັງສືສະເໜີລົງກວດກາ ຄວບຄຸມຄຸນນະພາບ ຕ້ອງສົ່ງແບບຟອມສຳເລັດຂອງແຕ່ລະສະໜາມຕິດຄັດມາພ້ອມ.
- ແນະນຳໃຫ້ວິຊາການ ກອງກວດ-ກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ ຕ້ອງໄດ້ຂຽນຄຳອະທິບາຍຊັດເຈນໃສ່ບົດລາຍງານຜົນສຳເລັດຂອງແຕ່ລະສະໜາມ, (ຂໍ້ທີ່ 23) ມີບາງສະໜາມພື້ນທີ່ກວດກູ້ຕົວຈິງແມ່ນຕົກຢູ່ບ້ານອື່ນ.

- ຫົວໜ້າທີມງານຕ້ອງໄດ້ເຊັກຂຸມທຳລາຍ ຫຼັງການທຳລາຍ ລບຕ ທຸກໆຄັ້ງພື້ນທີ່ຂຸມດັ່ງກ່າວ ຈົນບໍ່ມີສຽງສັນຍານ, ເພື່ອໃຫ້ມີຄວາມ ປອດໄພ.

## VI ສະຫຼຸບ

ໂດຍລວມແລ້ວຜ່ານການລົງຕິດຕາມກວດກາ ແລະ ຄວບຄຸມຄຸນນະພາບ ຫ້ອງການ ຄຊກລ ສະໜາມເກັບກູ້ທີ່ສຳເລັດແລ້ວ, ຂອງກອງກວດ-ກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ ເຫັນວ່າໃນພື້ນທີ່ດັ່ງກ່າວແມ່ນມີຄວາມປອດໄພ, ມີຄຸນນະພາບ ແລະ ບໍ່ພົບເສດເຫຼັກທີ່ໃຫຍ່ກ່ວາເຄິ່ງໜຶ່ງຂອງບົມບີ້ blu 26 (½ blu26) ມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຮັບຊາບ.

**ຫົວໜ້າຫ້ອງການ ຄຊກລ**

ໂຈມແຍງ ແພງທອງສະຫວັດ

**ຫົວໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ**

ສົມຊິດ.

**ບ່ອນສົ່ງ :**

ກອງກວດ-ກູ້ລະເບີດ 58 ກອງທັບ ເພື່ອຈັດຕັ້ງປະຕິບັດ

ຫ້ອງການ ຄຊກລ ເກັບມ້ຽນ 1 ສະບັບ.